ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ.

**********************

0538----

ະຊວງສຶກສາທິການ ແລະ ກິລາ

ເລກທີ............/ສສກ.ກກ

ນະຄອນຫຼວງວຽງຈັນ,ວັນທີ...08 MAY 2014...

# ຄຳສັ່ງແນະນຳ
## ຂອງລັດຖະມົນຕີວ່າການກະຊວງສຶກສາທິການ ແລະ ກິລາ

ເຖິງ: - ທ່ານຫົວໜ້າຫ້ອງການກະຊວງ, ຫົວໜ້າກົມ, ອົງການເທົ່າກົມ, ຜູ້ອຳນວຍການສະຖາບັນ, ສູນ;

- ທ່ານອະທິການບໍດີ ມະຫາວິທະຍາໄລແຫ່ງຊາດ, ມະຫາວິທະຍາໄລສຸພານຸວົງ, ມະຫາວິທະຍາໄລຈຳປາສັກ ມະຫາວິທະຍາໄລສະຫວັນນະເຂດ;
- ຫົວໜ້າພະແນກສຶກສາທິການ ແລະ ກິລາ ແຂວງ/ນະຄອນຫຼວງ;
- ຜູ້ອຳນວຍການວິທະຍາໄລ, ສະຖານບັນການສຶກສາ ທັງພາກລັດ ແລະ ເອກະຊົນ ໃນຂອບເຂດທົ່ວປະເທດ.

ເລື່ອງ: ນຳເອົາເນື້ອໃນທີ່ຈຳເປັນ ຂອງການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເຂົ້າໃນຫຼັກສູດ ການຮຽນ-ການສອນ ທຸກຂັ້ນ-ທຸກສາຍ ໃນຂະແໜງການສຶກສາ ແລະ ກິລາ.

-ອີງຕາມ: ແຜນຍຸດທະສາດຕ້ານການສໍ້ລາດບັງຫຼວງ ແຕ່ນີ້ຮອດປີ2020 ສະບັບເລກທີ 02/ນຍ, ລົງວັນທີ 4 ທັນວາ 2012 ແລະ ແຜນງານຈັດຕັ້ງປະຕິບັດຍຸດທະສາດແຕ່ນີ້ຮອດປີ2020 ສະບັບເລກທີ 28/ນຍ, ລົງວັນທີ 27 ກຸມພາ 2013.

-ອີງຕາມ: ມະຕິກອງປະຊຸມຄົ້ນຄວ້າປຶກສາຫາລື ກ່ຽວກັບການນຳເອົາວຽກງານຕ້ານການສໍ້ລາດບັງຫຼວງ ເຂົ້າໃນຫຼັກສູດ ການຮຽນ-ການສອນ ທຸກຂັ້ນ-ທຸກສາຍ ໃນຂະແໜງການສຶກສາ ແລະ ກິລາ, ດັ້ງວັນທີ 29 ມັງກອນ 2014.

ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ, ຈຶ່ງມີຄຳແນະນຳດັ່ງນີ້:

ໃຫ້ມະຫາວິທະຍາໄລ, ວິທະຍາໄລ, ສະຖາບັນການສຶກສາ ທັງພາກລັດ ແລະ ພາກເອກະຊົນ ໃນຂອບເຂດທົ່ວປະເທດ ນຳເອົາເນື້ອໃນທີ່ຈຳເປັນຂອງການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເຂົ້າໃນຫຼັກສູດ ການຮຽນ-ການສອນ ທຸກຂັ້ນ-ທຸກສາຍ ໃນຂະແໜງການສຶກສາ ແລະ ກິລາ ເລີ່ມແຕ່ຂັ້ນອະນຸບານສຶກສາ ຈົນເຖິງມະຫາວິທະຍາໄລ ໃຫ້ເລີ່ມສິດສອນໃນສົກຮຽນ 2014-2015 ລາຍລະອຽດດັ່ງນີ້:

1) ສຳລັບຂັ້ນອະນຸບານສຶກສາ ໃຫ້ແຊກຊ້ອນເຂົ້າໃນຫຼັກສູດການຮຽນ-ການສອນ, ຂັ້ນປະຖົມສຶກສາ ໃຫ້ແຊກຊ້ອນເຂົ້າໃນຫຼັກສູດ ວິຊາຄຸນສົມບັດ, ຂັ້ນມັດທະຍົມສຶກສາ ໃຫ້ແຊກຊ້ອນເຂົ້າໃນຫຼັກສູດ ວິຊາສຶກສາພົນລະເມືອງ, ສາຍອາຊີວະສຶກສາ; ສາຍສ້າງຄູ ແລະ ການສຶກສາຊັ້ນສູງ ໃຫ້ແຊກຊ້ອນເຂົ້າໃນຫຼັກສູດ ວິຊາການເມືອງ.
2) ໃຫ້ມະຫາວິທະຍາໄລ,ໂຮງຮຽນ, ສະຖາບັນການສຶກສາ, ສູນ ທັງພາກລັດແລະພາກເອກະຊົນ ໃນຂອບເຂດທົ່ວປະເທດ

ສົມທົບກັບຄະນະພັກ, ອົງການປົກຄອງ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈັດຕັ້ງໂຄສະນາເຜີຍແຜ່ດຳລັດ ແລະ ຍຸດທະສາດຕ້ານການສໍ້ລາດບັງຫຼວງ ພ້ອມທັງຈັດກິດຈະກຳຕ່າງໆ ທີ່ຕິດພັນກັບ ວຽກງານຕ້ານການສໍ້ລາດບັງຫຼວງ, ຜົນຮ້າຍຂອງການສໍ້ລາດບັງຫຼວງ ໃຫ້ພະນັກງານ, ຄູ-ອາຈານ ໃນຂົງເຂດທີ່ຕົນຮັບຜິດຊອບ.

3) ໃຫ້ສະຖາບັນຜູ້ບໍລິຫານການສຶກສາ ນຳເອົາການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເຂົ້າໃນຫຼັກສູດຝຶກອົບຮົມ ຜູ້ບໍລິຫານການສຶກສາຂັ້ນຕ່າງໆ ໃນໄລຍະພັກແລ້ງ ແລະ ຈັດຕັ້ງເຜີຍແຜ່ໃຫ້ຜູ້ບໍລິຫານ, ພະນັກງານ, ຄູ-ອາຈານ ໃຫ້ເລິກເຊິ່ງທົ່ວເຖິງ ທົ່ວຂະແໜງການສຶກສາ ແລະ ກິລາ.

4) ສຳລັບຄູ-ອາຈານ ທີ່ຈະສິດສອນ ຕ້ອງໄດ້ຝຶກອົບຮົມຄວາມຮູ້ທາງດ້ານກົດໝາຍ ແລະ ນິຕິກຳຕ່າງໆ ກ່ຽວກັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ.

5) ມອບໃຫ້ຫ້ອງການກະຊວງ, ກົມ, ອົງການເທົ່າກົມ, ສະຖາບັນການສຶກສາ, ສູນ, ມະຫາວິທະຍາໄລ, ວິທະຍາໄລ ທັງພາກລັດ ແລະ ພາກເອກະຊົນ ພະແນກສຶກສາທິການ ແລະ ກິລາແຂວງ/ນະຄອນຫຼວງ ໃນທົ່ວປະເທດ ປະສານສົມທົບກັນຢ່າງສະໜິດແໜ້ນ, ມີແຜນລະອຽດ ໃນການຊີ້ນຳຕາມການແບ່ງຂັ້ນຄຸ້ມຄອງ, ກຳນົດມາດຕະການ, ວິທີການລະອຽດ ໃນການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ພ້ອມທັງມີການ ຕິດຕາມ ກວດກາ ແລະ ປະເມີນຜົນ ເປັນແຕ່ລະໄລຍະ.

6) ທຸກໆພາກສ່ວນທີ່ກ່ຽວຂ້ອງ ຈົ່ງຈັດຕັ້ງຜັນຂະຫຍາຍ ຄຳສັ່ງສະບັບນີ້ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ ໃຫ້ໄດ້ຮັບການຈັດຕັ້ງປະຕິບັດ ຢ່າງເປັນຮູບປະທຳ.

ລັດຖະມົນຕີວ່າການ ກະຊວງສຶກສາທິການ ແລະ ກິລາ

ດຣ.ພັນຄຳ ວິພາວັນ